# ທັກສະການໂຄສະນາເຜີຍແຜ່ກົດໝາຍ ຢູ່ ສປປ ລາວ

## Law advertising skills in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 11

## ການໂຄສະນາເຜີຍແຜ່ກົດໝາຍຜ່ານການໄກ່ເກ່ຍຂໍ້ຂັດແຍ່ງຢູ່ຂັ້ນບ້ານ ແລະ ການແກ້ໄຂ ຄໍາຮ້ອງທຸກ

## Advertising through the village mediation and grievance redressal

### 1. ຄວາມໝາຍ ແລະ ຄວາມສໍາຄັນ

### 1.1. ຄວາມໝາຍ

ການໂຄສະນາເຜີຍແຜ່ກົດໝາຍ ຜ່ານການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ການແກ້ໄຂຄໍາຮ້ອງທຸກ ແມ່ນການສຶກສາອົບຮົມ, ຕອບຂໍ້ຂ້ອງໃຈ, ໃຫ້ຄໍາປຶກສາ, ແນະນໍາ ຫຼື ສະໜອງຄວາມຮູ້ກ່ຽວກັບກົດໝາຍ ໃຫ້ແກ່ຄູ່ກໍລະນີທີ່ຂັດແຍ່ງກັນ ໂດຍຜ່ານການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການແກ້ໄຂຄໍາຮ້ອງທຸກ ແນໃສ່ເຮັດໃຫ້ເຂົາເຈົ້າມີຄວາມຮັບຮູ້, ເຂົ້າໃຈ, ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ[1].

ການໂຄສະນາເຜີຍແຜ່ກົດໝາຍ ຜ່ານການໄກ່ເກ່ຍຂໍ້ຂັດແຍ່ງຢູ່ຂັ້ນບ້ານ ແລະ ການແກ້ຄໍາຮ້ອງທຸກ ແມ່ນການສຶກສາອົບຮົມທາງດ້ານ ກົດໝາຍ, ນິຕິກໍາໃຕ້ກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ໃຫ້ແກ່ປະຊາຊົນບັນດາເຜົ່າຢູ່ພາຍ ໃນບ້ານ ໂດຍສະເພາະ ແມ່ນຄູ່ກໍລະນີທີ່ຂັດແຍ່ງກັນ.

### 1.2. ຄວາມສໍາຄັນ

ການໂຄສະນາເຜີຍແຜ່ກົດໝາຍ ຜ່ານການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ການແກ້ໄຂຄໍາຮ້ອງທຸກ ເປັນການປະກອບສ່ວນເຂົ້າໃນວຽກງານການສ້າງລັດປົກຄອງດ້ວຍກົດໝາຍ, ເວົ້າສະເພາະ ແມ່ນຈັດຕັ້ງປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ; ປົກປັກຮັກສາ, ຊຸກຍູ້ ແລະ ສົ່ງເສີມວັດທະນະທໍາ, ຮີດຄອງປະເພນີອັນດີງາມຂອງຊາດ, ມູນເຊື້ອ ຄວາມຮັກ ແພງສາມັກຄີປອງດອງເປັນປຶກແຜ່ນແໜ້ນໜາຂອງປະຊາຊົນບັນດາເຜົ່າ; ຕ້ານ ແລະ ສະກັດກັ້ນ ບັນດາຂໍ້ຂັດ ແຍ່ງເລັກນ້ອຍ, ເບົາບາງ, ບໍ່ຫຍຸ້ງຍາກສັບສົນ, ການກະທໍາຜິດທາງອາຍາທີ່ບໍ່ເປັນອັນຕະລາຍຮ້າຍແຮງ ບໍ່ໃຫ້ແຜ່ ຂະຫຍາຍອອກເປັນວົງກວ້າງຢູ່ໃນສັງຄົມ ແລະ ແກ້ໄຂດ້ວຍວິທີການໄກ່ເກ່ຍໃຫ້ສິ້ນສຸດລົງດ້ວຍດີ, ສັນຕິວິທີ; ສ້າງຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໃນສັງຄົມ; ເພີ່ມທະວີຄວາມສາມັກຄີປອງດອງຂອງ ປະຊາຊົນບັນດາເຜົ່າ ໂດຍສະເພາະ ແມ່ນຄູ່ກໍລະນີ.

[1] ດໍາລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກໍາ, ປີ 2020, ໝວດທີ 2, ມາດຕາ 18.

**2. ຈຸດປະສົງ**

ການໂຄສະນາເຜີຍແຜ່ກົດໝາຍ ຜ່ານການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ການແກ້ໄຂຄໍາຮ້ອງທຸກ ມີຈຸດປະສົງ:

- ສຶກສາອົບຮົມ, ສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍຢູ່ໃນສັງຄົມ ໂດຍສະເພາະແມ່ນຢູ່ພາຍ ໃນບ້ານ;

- ສຶກສາອົບຮົມ ສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ, ກົດຮີດຄອງປະເພນີອັນດີງາມຂອງຊາດ ໃຫ້ແກ່ຄູ່ກໍລະນີ.

**3. ວິທີການດໍາເນີນການໂຄສະນາເຜີຍແຜ່ກົດໝາຍໂດຍຜ່ານການໄກ່ເກ່ຍ**

ໃນຂະບວນການໄກ່ເກ່ຍຂໍ້ຂັດແຍ່ງໃດໜຶ່ງນັ້ນຈະຕ້ອງສົມທົບວຽກຕ່າງໆດັ່ງຕໍ່ໄປນີ້ ພາຍຫຼັງກໍາໄດ້ເນື້ອໃນຂອງຄວາມຂັດແຍ່ງແລ້ວນັກໄກ່ເກ່ຍຈະຕ້ອງໃຫ້ຄວາມກະຈ່າງແຈ້ງກ່ຽວກັບລັກສະນະຂອງຂໍ້ຂັດແຍ່ງ, ຫຼັງຈາກນັ້ນກໍານົດໂຊງເຂດນິຕິກໍາທີ່ພົວພັນເຖິງຂໍ້ຂັດແຍ່ງດັ່ງກ່າວ. ນັກໄກ່ເກ່ຍແນະນໍາ ຫຼື ສະໜອງນິຕິກໍານັ້ນໃຫ້ຄູ່ກໍລະນີທີ່ຂັດແຍ່ງກັນເພື່ອໃຫ້ເຂົາເຈົ້າກໍາໄດ້ຈິດໃຈຂອງກົດໝາຍ[2];

ຜູ້ໄກ່ເກ່ຍຕ້ອງຊອກຮູ້ເບິ່ງວ່າຄູ່ກໍລະນີທີ່ຂັດແຍ່ງກັນໄດ້ມີນິຕິກໍາຄົບຖ້ວນແລ້ວ ຫຼື ບໍ່, ຖ້າຈໍາເປັນແມ່ນຜູ້ໄກ່ເກ່ຍໄຈ້ແຍກ, ອະທິບາຍຂໍ້ກໍານົດຂອງກົດໝາຍເພື່ອໃຫ້ສອງຝ່າຍເຂົ້າໃຈຈິດໃຈຂອງກົດໝາຍຢ່າງຖືກຕ້ອງ, ນອກຈາກນີ້ຜູ້ໄກ່ເກ່ຍອາດຈະສະໜອງເພີ່ມເຕີມກ່ຽວກັບຮີດຄອງປະເພນີ (ຂະນົບທໍານຽມ, ຄຸນສົມບັດສິນທໍາອັນດີງາມ) ໃຫ້ແກ່ຄູ່ກໍລະນີ. ຖ້າພົບບັນຫາທີ່ຫຍຸ້ງຍາກຜູ້ໄກ່ເກ່ຍຕ້ອງຂໍຄໍາເຫັນນັກຊ່ຽວຊານກົດໝາຍ, ພະນັກງານຍຸຕິທໍາທີ່ມີບົດຮຽນ, ປະສົບການຫຼາຍປີເພື່ອຮັບປະກັນເຮັດແນວໃດໃຫ້ບັນດາຂໍ້ນໍານົດກົດໝາຍ, ຂະນົບທໍານຽມ, ຄຸນສົມບັດສິນທໍາອັນດີງາມໄດ້ຖືກໝູນໃຊ້ເຂົ້າໃນແຕ່ລະກໍລະນີຂອງຄວາມຂັດແຍ່ງເກີດຂຶ້ນນັ້ນຢ່າງຖືກຕ້ອງ ແລະ ຊັດເຈນ[3];

ຜູ້ໄກ່ເກ່ຍເຈາະຈີ້ມເພື່ອໃຫ້ແຕ່ລະຝ່າຍສົມທຽບພຶດຕິກໍາຂອງຕົນກັບຂໍ້ການົດຂອງກົດໝາຍ, ຂອງຄຸນສົມບັດສິນທໍາພ້ອມທັງຕີລາຄາເອົາເອງວ່າໃນພຶດຕິກໍາຂອງຕົນນັ້ນອັນໃດຖືກ, ອັນໃດຜິດ ແລະ ຂອງຝ່າຍກົງກັນຂ້າມ. ການເຮັດຄືແນວນີ້ແມ່ນໜຶ່ງໃນບັນດາຂອດທີ່ຈໍາເປັນຂອງວຽກງານໄກ່ເກ່ຍທີ່ຊ່ອຍໃຫ້ຄູ່ກໍລະນີຂັດແຍ່ງກັນນັ້ນມີຄວາມຮັບຮູ້ກົດໝາຍເລິກເຊິ່ງກວ່າເກົ່າ;

ຜູ້ໄກ່ເກ່ຍຈັດໃຫ້ຄູ່ກໍລະນີທີ່ຂັດແຍ່ງພົບກັນເພື່ອຄົ້ນຄວ້າ, ແກ້ໄຂຄວາມບໍ່ຖືກຕ້ອງປອງດອງກັນ. ໃນເວລານີ້ຜູ້ໄກ່ເກ່ຍອາດຈະສົມທຽບ, ໄຈ້ແຍກບັນດາຂໍ້ກໍານົດຂອງກົດໝາຍຕໍ່ກັບບັນຫາທີ່ທັງສອງຝ່າຍກໍາລັງຂັດແຍ່ງກັນເພື່ອໃຫ້ທຸກຝ່າຍເຂົ້າໃຈ ແລະ ສາມາດໝູນໃຊ້ເຂົ້າໃນການແກ້ໄຂ. ບົນພື້ນຖານຂໍ້ກໍານົດຕ່າງໆ ຂອງກົດໝາຍ, ຜູ້ໄກ່ເກ່ຍອາດຈະສະເໜີວິທີການຕ່າງໆຂອງຕົນໃນການແກ້ໄຂເພື່ອໃຫ້ແຕ່ລະຝ່າຍຄົ້ນຄ້ວາພິຈາລະນາ;

ວຽກສຸດທ້າຍທີ່ມີຄວາມໝາຍທີ່ສຸດໃນການໂຄສະນາເຜີຍແຜ່ນິຕິກໍາ ແມ່ນຜູ້ໄກ່ເກ່ຍເນັ້ນໜັກບັນດາຂໍ້ກໍານົດທີ່ຈໍາເປັນ, ທີ່ກ່ຽວພັນຂອງກົດໝາຍ, ຖ້າທຸກຝ່າຍຫາກປະຕິບັດຢ່າງເຂັ້ມງວດໃນການປະພຶດປະຕິບັດຂອງ

---

[2] ປອ ຈອມຄໍາ ບຸບຜາລີວັນ, ປຶ້ມຄູ່ມື ວຽກງານໂຄສະນາເຜີຍແຜ່ກົດໝາຍ, ໜ້າ 59.

[3] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປີ 2018, ມາດຕາ 28

ຕົນກໍຈະຫຼີກເວັ້ນໄດ້ຂໍ້ຂັດແຍ່ງທີ່ເກີດຂຶ້ນ, ບັນຫານີ້ມີຄວາມໝາຍສໍາຄັນໃນການຍົກສູງຄວາມຮັບຮູ້ແລະສະຕິກົດໝາຍໃຫ້ແກ່ທຸກຝ່າຍ.

**4. ວິທີການແກ້ໄຂເພື່ອຍົກສູງປະສິດທິພາບຂອງການເຜີຍແຜ່ກົດໝາຍໃນວຽກງານໄກ່ເກ່ຍ**

ການໂຄສະນາເຜີຍແຜ່ນິຕິກໍາ ໂດຍຜ່ານການໄກ່ເກ່ຍແມ່ນຮູບການໜຶ່ງຂອງການໂຄສະນານິຕິກໍາ ທີ່ຕິດແທດກັບຕົວຈິງ, ງ່າຍດາຍ ແລະ ມີປະສິດທິພາບ.ຢ່າງໃດກໍຕາມ, ເພື່ອເສີມຂະຫຍາຍບົດບາດອັນຕັ້ງໜ້າຂອງຮູບການນີ້ຈະຕ້ອງໄດ້ເອົາໃຈໃສ່ວິທີການແກ້ໄຂຕ່າງໆດັ່ງຕໍ່ໄປນີ້:

- ຈັດຕັ້ງຊຸດບໍາລຸງວິຊາສະເພາະໄກ່ເກ່ຍຢ່າງເປັນປົກກະຕິ, ຊຸດບໍາລຸງອາດຈະຈັດຕັ້ງປີລະເທື່ອ ຫຼື ຈັດຕັ້ງຕາມບັນຫາສະເພາະ (ຫົວຂໍ້ສະເພາະ) ເມື່ອມີກົດໝາຍໃໝ່ອອກມາທີ່ພົວພັນຢ່າງໃກ້ຊິດກັບການດໍາລົງຊີວິດຂອງປະຊາຊົນຢູ່ທ້ອງຖິ່ນ. ເນື້ອໃນຂອງຊຸດບໍາລຸງຕ່າງໆຄວນສ້າງຢ່າງມີໄຫວພິບ, ນິ້ມນວນແລະສອດຄ່ອງກັບຈຸດພິເສດຂອງວຽກງານໄກ່ເກ່ຍຢູ່ແຕ່ລະທ້ອງຖິ່ນ, ອາດຝຶກອົບຮົມກ່ຽວກັບເຕັກນິກການໄກ່ເກ່ຍ ແລະ ການເຜີຍແຜ່ກົດໝາຍໂດຍຜ່ານການໄກ່ເກ່ຍ ຫຼື ສະເໜີແນະນໍາບັນດາຂໍ້ການົດຂອງກົດໝາຍທີ່ພົວພັນໂດຍກົງເຖິງການໄກ່ເກ່ຍຢູ່ຮາກຖານ;

- ຈັດຕັ້ງກອງປະຊຸມສະຫຼຸບ ຫຼື ພົບປະແລກປ່ຽນບົດຮຽນ, ປະສົບການກ່ຽວກັບການໄກ່ເກ່ຍວຽກງານເຜີຍແຜ່ ກົດໝາຍໂດຍຜ່ານການໄກ່ເກ່ຍ, ການຈັດກອງປະຊຸມຄືແນວນີ້ເປັນເວທີໃຫ້ບັນດາຜູ້ໄກ່ເກ່ຍສາມາດແລກປ່ຽນບົດຮຽນ, ປະສົບການນໍາກັນ, ຊ່ວຍກັນແກ້ໄຂຂໍ້ຫຍຸ້ງຍາກຕ່າງໆໃນການປະຕິບັດໜ້າທີ່ວຽກງານຕົວຈິງ;

- ຈັດຕັ້ງການສອບຜູ້ໄກ່ເກ່ຍ, ຜູ້ໂຄສະນາເຜີຍແຜ່ກົດໝາຍເກັ່ງດ້ວຍເນື້ອໃນທີ່ອຸດົມສົມບູນ, ຫຼາຍຮູບຫຼາຍສີ ແລະ ມີຊີວິດຊີວາ. ການສອບຄືແນວນີ້ບໍ່ພຽງແຕ່ເປັນການສ້າງຂະບວນການ, ປຸກລະດົມຂະບວນການເທົ່ານັ້ນຍັງເປັນໂອກາດທີ່ດີເພື່ອໃຫ້ບັນດາຜູ້ໄກ່ເກ່ຍໄດ້ພົບປະ, ແລກປ່ຽນບົດຮຽນ, ປະສົບການວຽກງານນໍາກັນ. ນອກຈາກນີ້, ຂຶ້ນກັບຄວາມສາມາດຂອງແຕ່ລະທ້ອງຖິ່ນອາດຈະຈັດຕັ້ງການຮ່ວມຊີວິດວິຊາສະເພາະຢ່າງເປັນປົກກະຕິໃຫ້ແກ່ບັນດາຜູ້ໄກ່ເກ່ຍ;

- ສະໜອງເອກະສານຕ່າງໆ ແລະກົດໝາຍໃຫ້ແກ່ຖັນແຖວຜູ້ໄກ່ເກ່ຍ. ການສະໜອງເອກະສານແລະກົດໝາຍໃຫ້ແກ່ຖັນແຖວຜູ້ໄກ່ເກ່ຍເປັນມາດຕະການໜຶ່ງທີ່ສໍາຄັນໃນການເພີ່ມທະວີປະສິດທິພາບຂອງການເຜີຍແຜ່ນິຕິກໍາໂດຍຜ່ານການໄກ່ເກ່ຍ. ປະຈຸບັນການຊອກຫາບັນດາກົດໝາຍໂດຍສະເພາະແມ່ນກົດໝາຍໃໝ່ຍັງເປັນຄວາມຫຍຸ້ງຍາກຍ້ອນຫຼາຍເຫດຜົນທີ່ແຕກຕ່າງກັນ, ເພາະສະນັ້ນບັນດາອົງການຍຸຕິທໍາທ້ອງຖິ່ນຈະຕ້ອງມີແຜນການ ແລະ ມາດຕະການລະອຽດເພື່ອສະໜອງກົດໝາຍຕ່າງໆ ທີ່ພົວພັນເຖິງວຽກງານໄກ່ເກ່ຍໃຫ້ແກ່ບັນດານັກໄກ່ເກ່ຍຢ່າງພຽງພໍ, ຈະຕ້ອງຍູ້ແຮງການສ້າງ, ການຄຸ້ມຄອງຕູ້ປຶ້ມກົດໝາຍເພື່ອເປັນແຫຼ່ງສະໜອງກົດໝາຍໃຫ້ແກ່ບັນດາຜູ້ໄກ່ເກ່ຍ;

- ສ້າງ ແລະ ພິມຈໍາໜ່າຍ "ປຶ້ມຄູ່ມືຜູ້ໄກ່ເກ່ຍ". ປຶ້ມຄູ່ມືຜູ້ໄກ່ເກ່ຍຄວນມີສອງເນື້ອໃນຕົ້ນຕໍຄື:

(1)ກົດໝາຍ ແລະ ນິຕິກໍາຕ່າງໆ ທີ່ພົວພັນເຖິງວຽກງານໄກ່ເກ່ຍ;

(2)ເຕັກນິກ ແລະ ບາງບົດຮຽນ, ປະສົບການໃນວຽກງານໄກ່ເກ່ຍ. ປຶ້ມຄູ່ມືຈະເປັນເຄື່ອງມືໃຫ້ແກ່ບັນດາຜູ້ໄກ່ເກ່ຍໃນການໄກ່ເກ່ຍ ແລະ ການໂຄສະນາເຜີຍແຜ່ກົດໝາຍ. ສຸດທ້າຍ, ເພື່ອຮັບປະກັນບົດບາດ ແລະ ປະສິດທິພາບຂອງວຽກງານໄກ່ເກ່ຍນັ້ນອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ບັນດາອົງການ, ຂະແໜງການທີ່ມີສ່ວນພົວພັນຕ້ອງສ້າງທຸກເງື່ອນໄຂສະດວກ ແລະ ມີມາດຕະການຕ່າງໆເພື່ອສະໜັບສະໜູນ, ຊ່ວຍເຫຼືອອັນລະອຽດ. ອີງໃສ່ສະພາບ ແລະ ຄວາມສາມາດທາງດ້ານງົບປະມານຂອງທ້ອງຖິ່ນ, ອົງການປົກຄອງສ້າງເງື່ອນໄຂ, ສະໜັບສະໜູນດ້ານທຶນຮອນໃຫ້ແກ່ການປັບປຸງບູລະນະການຈັດຕັ້ງ, ການບຳລຸງວິຊາສະເພາະ, ການສະຫຼຸບ, ການແຂ່ງຂັນ, ການຍ້ອງຍໍແນໃສ່ຍົກສູງປະສິດທິພາບຂອງວຽກງານໄກ່ເກ່ຍຢູ່ຮາກຖານ, ພະແນກຍຸຕິທຳຂັ້ນແຂວງ, ຫ້ອງການຍຸຕິທຳຂັ້ນເມືອງມີຄວາມຮັບຜິດຊອບໃນການບຳລຸງວິຊາສະເພາະໄກ່ເກ່ຍ, ສະໜອງເອກະສານວິຊາສະເພາະໃຫ້ແກ່ຄະນະໄກ່ເກ່ຍຕາມການແນະນຳຂອງກະຊວງຍຸຕິທຳ, ສະຫຼຸບວຽກງານຂອງ ຄະນະໄກ່ເກ່ຍ, ລາຍງານວຽກງານການໄກ່ເກ່ຍຕໍ່ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການຍຸຕິທຳຂັ້ນເທິງ (ຕາມຂັ້ນຂອງການປົກຄອງ) ເພື່ອຈັດຕັ້ງການແຂ່ງຂັນ, ການຍ້ອງຍໍໃນວຽກງານໄກ່ເກັ່ຽຢູ່ຮາກຖານ.

**5. ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ**

**5.1. ການຍື່ນຄຳຮ້ອງຂໍ ຫຼື ສະເໜີ**

ໃນເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ ຊຶ່ງຄູ່ກໍລະນີບໍ່ສາມາດຕົກລົງແກ້ໄຂກັນໄດ້ດ້ວຍວິທີອື່ນນັ້ນ ຜູ້ທີ່ອ້າງຕົນວ່າເປັນຜູ້ເສຍຫາຍມີສິດຍື່ນຄຳຮ້ອງຂໍ ຫຼື ຄຳສະເໜີຕໍ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານທີ່ຕົນອາໄສຢູ່ ຫຼື ບ່ອນທີ່ມີ ຂໍ້ຂັດແຍ່ງເກີດຂຶ້ນເພື່ອໄກ່ເກ່ຍ.

ສຳລັບຜູ້ທີ່ບໍ່ມີຄວາມສາມາດຂຽນຄຳຮ້ອງດ້ວຍຕົນເອງໄດ້ ກໍມີສິດເຂົ້າໄປສະເໜີໂດຍກົງທາງປາກເປົ່າ ເພື່ອໃຫ້ໄກ່ເກ່ຍ.

**5.2. ການຮັບຄຳຮ້ອງຂໍ ຫຼື ຄຳສະເໜີ ແລະ ການແຈ້ງໃຫ້ຊາບ**

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງຮັບເອົາຄຳຮ້ອງຂໍ ຫຼື ຄຳສະເໜີດ້ວຍການຈົດເຂົ້າໃນປຶ້ມບັນທຶກ ຂາເຂົ້າ ພ້ອມທັງເຮັດເອກະສານຕິດຕາມໃຫ້ຜູ້ມາຍື່ນ ເພື່ອຄວາມສະດວກໃນການຕິດຕາມ. ສຳລັບການສະເໜີ ໂດຍກົງທາງປາກເປົ່ານັ້ນໜ່ວຍໄກ່ເກ່ຍຕ້ອງຈົດບັນທຶກເນື້ອໃນການສະເໜີແລ້ວອ່ານໃຫ້ຜູ້ກ່ຽວຟັງພ້ອມທັງ ລົງລາຍເຊັນ ແລະ ແປະໂປ້ມືໃສ່ໄວ້ ເພື່ອເປັນຫຼັກຖານ. ພາຍຫຼັງໄດ້ຮັບຄຳຮ້ອງຂໍ ຫຼື ຄຳສະເໜີແລ້ວໜ່ວຍໄກ່ ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງແຈ້ງໃຫ້ຝ່າຍຜູ້ຖືກຮ້ອງຂໍຊາບ ພາຍໃນກຳນົດ ສາມ ວັນ ເພື່ອໃຫ້ອະທິບາຍ, ຊີ້ແຈງ ຕໍ່ບັນຫາດັ່ງກ່າວ ແລະ ຝ່າຍທີ່ຖືກຮ້ອງຂໍ ຕ້ອງສົ່ງຄຳອະທິບາຍ, ຊີ້ແຈງຂອງຕົນໃຫ້ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນ ບ້ານພາຍໃນກຳນົດເວລາ ສີ່ ວັນ ນັບແຕ່ວັນໄດ້ຮັບການແຈ້ງເປັນຕົ້ນໄປ.

**5.3. ການຄົ້ນຄວ້າຂໍ້ຂັດແຍ່ງ**

ເມື່ອໄດ້ຮັບຄໍາຮ້ອງຂໍ ຫຼື ຄໍາສະເໜີ, ຄໍາອະທິບາຍ, ຊີ້ແຈງຈາກຄູ່ກໍລະນີແລ້ວ ຄະນະໄກ່ເກ່ຍຂໍ້ຂັດແຍ່ງ ຂັ້ນບ້ານ ຕ້ອງນໍາເອົາບັນຫາດັ່ງກ່າວມາຄົ້ນຄວ້າ ພາຍໃນກໍານົດເວລາ ສາມ ວັນນັບແຕ່ວັນໄດ້ຮັບເປັນຕົ້ນໄປ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈເປັນເອກະພາບກ່ຽວກັບຂໍ້ຂັດແຍ່ງ ກ່ອນນໍາໄປດໍາເນີນການໄກ່ເກ່ຍ.

ໃນກໍລະນີເຫັນວ່າມີຄວາມຈໍາເປັນ ແມ່ນໃຫ້ນໍາເອົາບັນຫາດັ່ງກ່າວໄປລາຍງານຂໍຄໍາເຫັນ, ຂໍທິດຊີ້ນໍາຈາກ ຄະນະໜ່ວຍພັກຮາກຖານບ້ານ, ນາຍບ້ານ ຫຼື ລາຍງານຂໍຄໍາເຫັນທາງດ້ານວິຊາການຈາກຫ້ອງການຍຸຕິທໍາຂັ້ນ ເມືອງ ແລະ ພາກສ່ວນກ່ຽວຂ້ອງບ່ອນທີ່ຕົນຂຶ້ນກັບ.

**5.4. ການກະກຽມໃຫ້ແກ່ການໄກ່ເກ່ຍ**

ພາຍຫຼັງໄດ້ ຄົ້ນຄວ້າ ເຫັນວ່າມີຄວາມສາມາດໄກ່ເກ່ຍໄດ້ນັ້ນ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງກະ ກຽມ ຄະນະ, ເນື້ອໃນ, ວັນ, ເວລາ ແລະ ສະຖານທີ່ ພ້ອມທັງອອກບັດເຊີນຄູ່ກໍລະນີ ແລະ ຜູ້ທີ່ກ່ຽວຂ້ອງ ເພື່ອ ເຂົ້າຮ່ວມການໄກ່ເກ່ຍ.

ສໍາລັບການເຊີນສະມາຊິກຄອບຄົວ ຫຼື ຍາດພີ່ນ້ອງຂອງຄູ່ກໍລະນີແຕ່ລະຝ່າຍ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຄູ່ກໍລະນີເອງ.

**5.5. ການດໍາເນີນການໄກ່ເກ່ຍ**

ການໄກ່ເກ່ຍ ແມ່ນໃຫ້ດໍາເນີນດ້ວຍການເປີດກອງປະຊຸມ ໂດຍເຮັດຊ້ອງໜ້າ ລະຫວ່າງ ຄະນະໄກ່ເກ່ຍ, ຄູ່ກໍລະນີ, ສະມາຊິກຄອບຄົວ ຫຼື ຍາດພີ່ນ້ອງຂອງຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມອື່ນ. ສໍາລັບບາດກ້າວການດໍາເນີນ ການໄກ່ເກ່ຍແມ່ນໃຫ້ປະຕິບັດຕາມ ດໍາລັດວ່າດ້ວຍການໄກ່ເກຍຂໍ້ຂັດແຍ່ງຂັ້ນບ້ານ.

**6. ການສ້າງແຜນການ ການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ**

ເນື່ອງຈາກວ່າ ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ເປັນການແກ້ໄຂຂໍ້ຂັດແຍ່ງ ດ້ວຍການຮ້ອງຂໍ ຫຼື ການສະເໜີ ຂອງຄູ່ກໍລະນີ. ສະນັ້ນ, ເມື່ອມີການຮ້ອງຂໍ ຫຼື ການສະເໜີຂອງຄູ່ກໍລະນີແລ້ວ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານຕ້ອງໄດ້ຂຶ້ນແຜນການເພື່ອແກ້ໄຂດ້ວຍການນໍາເອົາຂໍ້ຂັດແຍ່ງດັ່ງກ່າວມາຄົ້ນຄວ້າ ປຶກສາຫາລືພາຍໃນໝູ່ຄະນະ, ຈາກນັ້ນກໍກະກຽມຄວາມພ້ອມໃຫ້ແກ່ການໄກ່ເກ່ຍ ແລະ ກ້າວໄປເຖິງການດໍາເນີນການໄກ່ເກ່ຍ.

**7. ຄວາມໝາຍຂອງການແກ້ໄຂຄໍາຮ້ອງທຸກ**

ການແກ້ໄຂຄໍາຮ້ອງທຸກ ແມ່ນ ການນໍາເອົາຄໍາສະເໜີ, ຄໍາຮ້ອງຟ້ອງ ແລະ ຄໍາຮ້ອງຂໍຄວາມເປັນທໍາຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມາຄົ້ນຄວ້າພິຈາລະນາແກ້ໄຂ ໂດຍອົງການບໍລິຫານ, ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈໍາສະພາແຫ່ງຊາດ ຕາມພາລະບົດບາດຂອງຕົນ ຢ່າງຖືກຕ້ອງ ແລະ ເປັນທໍາ[4].

**8. ນະໂຍບາຍ ຂອງລັດກ່ຽວກັບວຽກງານແກ້ໄຂຄໍາຮ້ອງທຸກ**

---

[4] ກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກ, ສະບັບເລກທີ 05, ລົງວັນທີ 9 ພະຈິກ 2016, ມາດຕາ 3

ລັດ ອຳນວຍຄວາມສະດວກໃຫ້ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ສິດຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂເພື່ອປົກປ້ອງຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ເຮັດໃຫ້ກົງຈັກລັດ ມີຄວາມເຂັ້ມແຂງ, ພະນັກງານມີຄວາມໂປ່ງໃສ, ປະຕິບັດໜ້າທີ່ຢ່າງຖືກຕ້ອງ ແລະ ເປັນທຳ, ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນສັງຄົມ.

ລັດ ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ອຸປະກອນ ໃຫ້ອົງການທີ່ກ່ຽວຂ້ອງຕາມຄວາມເໝາະສົມ ເພື່ອສາມາດເຄື່ອນໄຫວວຽກງານໃນການແກ້ໄຂຄຳຮ້ອງທຸກຢ່າງ ມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ຊຸກຍູ້, ສົ່ງເສີມໃຫ້ມີການໂຄສະນາເຜີຍແຜ່ ກົດໝາຍ ແລະ ລະບຽບການ ຢ່າງກວ້າງຂວາງ, ໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນໃນໝູ່ປະຊາຊົນ ຕາມປະເພນີ, ກົດໝາຍ ແລະ ລະບຽບການ ເພື່ອຫຼຸດຜ່ອນການຮ້ອງທຸກ ລວມທັງສຽງຈົ່ມວ່າຂອງສັງຄົມ.

## 9. ຫຼັກການກ່ຽວກັບການພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ

ການແກ້ໄຂຄຳຮ້ອງທຸກ ຕ້ອງຮັບປະກັນຕາມຫຼັກການພື້ນຖານ ດັ່ງນີ້:

1) ຖືກຕ້ອງຕາມ ລັດຖະທຳມະນູນ, ກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ;
2) ຮອບດ້ານ, ຄົບຖ້ວນ, ພາວະວິໄສ, ຖືກຕ້ອງເປັນທຳ ແລະ ທັນຕາມກຳນົດເວລາ;
3) ສະເໝີພາບຕໍ່ໜ້າກົດໝາຍ;
4) ແຈ້ງຜົນຂອງການແກ້ໄຂໃຫ້ ຜູ້ຮ້ອງທຸກ, ຜູ້ຖືກຮ້ອງທຸກ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຢ່າງເປັນລາຍລັກອັກສອນ.

ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດຮ້ອງທຸກຕໍ່ ອົງການທີ່ກ່ຽວຂ້ອງ ເພື່ອປົກປ້ອງຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ທີ່ຖືກລະເມີດ ຫຼື ຖືກໂຕ້ແຍ່ງຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ.

ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະລາຍງານ, ເຂົ້າຮ່ວມ ແລະ ປະກອບສ່ວນໃນການແກ້ໄຂຄຳຮ້ອງທຸກ ເມື່ອເຫັນວ່າ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ມີການລະເມີດກົດໝາຍ.

**References:**


1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປີ 2018;
2. ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກປີ 2016;
3. ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020;
4. ປະມວນເອກະສານຝຶກອົບຮົມທັກສະການໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
5. ປື້ມໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ ສປປ ລາວ, ປີ 2022;
6. ຕຳລາກໍ່ສ້າງວິຊາຊີບຍຸຕິທຳ, ທັກສະການໃຫ້ຄຳປຶກສາທາງດ້ານກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
7. ປອ. ຈອມຄຳບຸບຜາລີວັນ, ປື້ມຄູ່ມື ວຽກງານເຜີຍແຜ່, ສຶກສາອົບຮົມກົດໝາຍ, ປີ 2008.